# ບົດທີ 20

# ຕົວຢ່າງຂອງອານາຈັກ ພາກຕົ້ນ



**1** ສະໄໝປີຕ່າງ ໆ ທີ່ເຮົາຮຽນໃນຫຼັກສູດ ມັດທາຍ ເຫຼັ້ມທີ່ 3 ຈີບົລງດ້ວຍ ມັດທາຍ ບົດທີ່ 13

ກ. ໃນຍຸກນີ້ ເຮົາຮຽນເລື່ອງສະໄໝປີໃດ? ________________________________

ຂ. ໃນສະໄໝປີນີ້ ພະອົງປ່າວປະກາດຍິ່ງຫຼາຍກ່ວາເກົ່າ. ພະອົງປ່າປະກາດດ້ວຍໃຊ້ເຫດການສອງຢ່າງ? ____________________________________________________

**2** ຕອນສຸດທ້າຍໃນປີທີ່ ພະເຢຊູ ຊີ້ສຽງດີນີ້ເຮົາໃຊ້ຫົວເລື່ອງໃດ? (ເລືອກ)

ກ. ສັດຕູຂອງອານາຈັກ

ຂ. ຕົວຢ່າງຂອງອານາຈັກ

ຄ. ຫຼັກຖານຂອງອານາຈັກ

**3** ຄຳອຸປະມາທຸກປະການໃນ ມັດທາຍບົດ 13 ນັ້ນເວົ້າເຖິງຂໍ້ຄວາມລຶກລັບເລື່ອງດຽວຄືເລື່ອງໃດ? (ມທ 13:10-11)____________________________________________

**4** ໃນສະໄໝຕົ້ນປີ ທີ່ພະອົງຊີ້ສຍງດີ ລູກາ 5:1 ບອກວ່າ "ຢູ່ມາເມື່ອປະຊາຊົນກຳລັງບຸບຽດກັນເຂົ້າມາເພື່ອຈະໄດ້ຟັງພະ ທຳຂອງພະເຈົ້າ..."

ກ. ພະເຢຊູຍົກຄຳເທດສະໜາມາຈາກພະຄຳຂອງໃຜ? ________________________

ຂ. ເພິ່ນເທດສະໜາດ້ວຍຍົກຄຳອຸປະມາເລື່ອງຫຍັງ? ________________________

*ຄຳອຸປະມາຄືຫຍັງ?* **ຄຳອຸປະມາ ຄື ຄຳປຽບທຽບ**

*ທີ່ຍົກມາເປັນຕົວຢ່າງ ເຊິ່ງຍັກມາຈາກຊີວິດປະຈຳວັນເພື່ອແກ້ໄຂເລື່ອງດ້ານ* **ຈິດວິນຍານ**

**5** ໃຫ້ທ່ານອ່ານຄຳອຸປະມາ ໃນມັດທາຍ 13:1-9 ເຊິ່ງເປັນຄຳອຸປະມາທຳອິດໃນມັດທາຍບົດ 13 ໃນຄຳອຸປະມານີ້ ພະ ອົງຍົກຕົວຢ່າງໃດຈາກຊີວິດປະຈຳວັນ? ____________________

**6** ຄຳອຸປະມາຍົກເລື່ອງຈາກສິ່ງທີ່ຕາເຮົາເຫັນ ໃຈເຮົາຮູ້ ແລະ ຍົກເອົາສິ່ງນັ້ນມາອະທິບາຍເລື່ອງຄວາມຈິງດ້ານຈິດວິນ ຍານປະການທີ່ຕາເຮົາເຫັນບໍ່ໄດ້. ພະເຢຊູອະທິບາຍຄວາມປະມານັ້ນໃນ ມທ 13:18-23

ກ. ຂໍ້ຄວາມໃນຄຳອຸປະມາທຸກປະການໃນບົດ 13 ນີ້ແມ່ນເລື່ອງຫຍັງ? ______________

ຂ. ເນື້ອໃນ ຫຼື ຈຸດປະສົງຂອງຄຳອຸປະມາເລື່ອງຜູ້ຫວ່ານແມ່ນຫຍັງ? ________________

**7** ໃນການຍົກຄຳອຸປະມາສອນດ້ານຈິດວິນຍານ ສິ່ງສຳຄັນຫຼາຍຄື ຈຳເປັນຕ້ອງຍົກມາຈາກຊີວິດປະຈຳວັນ ເຊິ່ງຜູ້ຟັງຊຳ ນານມາແລ້ວ. ໃນເມືອງຄາລີເລ ມີການປູກຝັງຫຼາຍ ດັ່ງນັ້ນພະອົງຈຶ່ງຍົກຄຳອຸປະມານັ້ນມາເພື່ອຫຍັງ? (ເລືອກ)

ກ. ເພື່ອວ່າປະຊາຊົນໃນແຂວງຄາລີເລບໍ່ຮູ້ເລື່ອງການຫວ່ານ.

ຂ. ເພື່ອວ່າປະຊາຊົນໃນແຂວງຄາລີເລຮູ້ເລື່ອງການຫວ່ານດີ.

ຄ. ເພື່ອຮູ້ແຕ່ສ່ວນໜ້ອຍ.

**8** (ຈົ່ງຕື່ມຄວາມໃສ່ບ່ອນວາງໃຫ້ຖືກ) ຄຳອຸປະມາຍົກ ________________ ມາຈາກຊີວິດ ________________ ເພື່ອອະທິບາຍ ເລື່ອງຄວາມຈິງດ້ານ ____________________

*ຈົ່ງຈື່ໄວ້ວ່າຄຳອຸປະມາທຸກປະການໃນມັດທາຍ ບົດ 13 ນີ້ມີເນື້ອຄວາມເລື່ອງອານາຈັກສະຫວັນ.*

| |
|---|
| ໃຫ້ທ່ານເອົາສໍສີແດງຂີດກ້ອງຄຳ “ລາຊະອານາຈັກ” ແລະ “ລາຊະແຜ່ນດິນ” ໃນຫຼາຍຂໍ້ຕໍ່ໄປນີ້ຄື: ຂໍ້ 11, 19, 24, 31, 38, 41, 43, 44, 45, 47 ແລະ 52 |

**9** ພະເຢຊູ ໄດ້ຍົກຄຳອຸປະມາ ເພື່ອສອນເລື່ອງຄວາມຈິງດ້ານຈິດວິນຍານເທື່ອລະປະການ. ຖ້າວ່າພວກເຮົາຈະຕີຄວາມໝາຍຢ່າງລະອຽດໃນທຸກຈຸດນ້ອຍໆ ກໍຈະບໍ່ມີປະໂຫຍດ. ໃນຄຳອຸປະມາແຕ່ລະປະການມີຈຸດສອນສຳຄັນແຕ່ລະປະການດຽວ.

ຄຳອຸປະມາທຸກປະການໃນ ມັດທາຍ ບົດ 13 ນີ້ ອ້າງເຖິງແຕ່ເນື້ອຄວາມດຽວຄືຫັຍງ? _____

**10** ຕາມທຳມະດາໃນອຸປະມາສອນເລື່ອງຈຸດສຳຄັນເທື່ອລະຈັກປະການ? (ເລືອກ)

ກ. ຫຼາຍຂໍ້ຕາມທຸກຈຸດນ້ອຍ

ຂ. ແຕ່ປະການດຽວ

ຄ. ສອງປະການ

**11** ຄັນທ່ານຕອບຢ່າງຖືກຕ້ອງໃນຂໍ້ເທິງນັ້ນ ເຮົາອາດຈະຕັ້ງກົດລະບຽບເລື່ອງວິທີຕີຄວາມໝາຍໃນຄຳອຸປະມາໄດ້. ໃຫ້ທ່ານຕື່ມຄວາມທີ່ຂາດຕໍ່ໄປນີ້: "ໃນການຕີຄວາມໝາຍຂອງຄຳອຸປະມາ ທ່ານຈົ່ງຊອກຫາແຕ່ຄວາມຈິງທີ່ສຳຄັນດ້ານຈິດວິນຍານ _______ ປະການ"

**12** ໃຫ້ຮຽນຄືນໜ້ອຍໜຶ່ງ

ກ. "ຄຳອຸປະມາ"ໝາຍຄວາມວ່າຫຍັງ? ________________________________________

________________________________________________________________

ຂ. ທຳມະດາມີຄຳສອນເລື່ອງດ້ານຈິດວິນຍານຈັກປະການ ໃນຄຳອຸປະມາອັນໃດ ອັນນຶ່ງ?

________________________________________________________________

ຄ. ຖ້າວ່າເຮົາຈະຕີຄວາມໝາຍໃນຄຳອຸປະມາຢ່າງຖືກຕ້ອງ ເຮົາຈະຕີຕາມກົດລະບຽບໃດ?

________________________________________________________________

ງ. ຄຳອຸປະມາ 8 ປະການ ໃນ ມັດທາຍ 13 ມີເນື້ອຄວາມໃດ? ____________________

**13** ໃນຄຳອຸປະມາ ເລື່ອງຜູ້ຫວ່ານ ພະອົງສອນເລື່ອງອານາຈັກສະຫວັນ ແຕ່ພວກສາວົກບໍ່ເຂົ້າໃຈດີ ເຂົາຈຶ່ງຖາມພະອົງວ່າ ຢ່າງໃດ? ____________________________________________

**14** ພະເຢຊູຕອບເຂົາວ່າພະອົງສອນໂດຍໃຊ້ຄຳອຸປະມາເພາະສອງເຫດແມ່ນຫຍັງ? (ເລືອກ)

ກ. ເພື່ອໃຫ້ຄົນຊອກຫາຄວາມຈິງເຫັນຮູ້ໄດ້.

ຂ. ເພື່ອໃຫ້ຄົນໃຈປົກ ໃຈໜາ ແລະ ຫູໜັກ ຕາເຂົາກໍຫຼັບຈຶ່ງຈະບໍ່ເຂົ້າໃຈ

ຄ. ເພື່ອບໍ່ໃຫ້ຜູ້ໃດເຂົ້າໃຈຈັກຄົນ.

ງ. ເພື່ອໃຫ້ທຸກຄົນເຂົ້າໃຈ.

**15** ພະເຢຊູ ອະທິບາຍເລື່ອງນັ້ນວ່າຜູ້ໃດມີໃຈຖ່ອມລົງແລ້ວເປີດຈິດໃຈພ້ອມຈະຮັບຟັງພະທຳ ຍິ່ງເຂົ້າໃຈແຕ່ຜູ້ໃດທີ່ມີຈິດໃຈ ແຂງກະດ້າງບໍ່ຢາກຟັງກໍ່ຈະຍິ່ງບໍ່ເຂົ້າໃຈ ພວກເຂົາຄ້າຍຄືກັບຄົນທີ່ເຮັດຜິດຢ່າງທີ່ພະເຈົ້າຈະບໍ່ໃຫ້ອະໄພໃຫ້ໄດ້ ໃນ ມທ 12:32 ແລະໃນ ມທ 7:6 ມີຄວາມທີ່ວ່າ: "ຢ່າເອົາຂອງປະເສີດໃຫ້ແກ່ໝາ ຢ່າໂຍນໄຂ່ມຸກໃສ່ຕໍ່ໜ້າ.." ໃນລາຍຊື່ຕໍ່ໄປນີ້ແມ່ນພວກໃດທີ່ "ບໍ່ມີນັ້ນເຖິງແມ່ນສິ່ງທີ່ຕົນມີຢູ່ກໍ່ຈະຊິງຍົກເອົາໄປຈາກຜູ້ນັ້ນເສຍ" (ໃຫ້ໝາຍ √ ໄວ້ດ້ວຍ)

_____ກ. ພວກຟາລິຊາຍ

_____ຂ. ເປໂຕ

_____ຄ. ພວກນັກທຳ

_____ງ. ລູກສິດຂອງໂຢຮັນບັບຕິສະໂຕ

_____ຈ. ເຮໂລດຜູ້ປົກຄອງເມືອງ.

**16** ດັ່ງນັ້ນຄຳອຸປະມາມີຜົນປະໂຫຍດຢູ່2ຢ່າງຄື: ປ່ອງຢ້ຽມທີ່ເປີດໃຫ້ຄວາມສະຫວ່າງເຂົ້າມາ ແລະ ຜ້າກັ້ງທີ່ບໍ່ໃຫ້ຄວາມ ສະຫວ່າງເຂົ້າມາ.

ກ. ພະທຳທີ່ວ່າ"ຜູ້ໃດມີຢູ່ແລ້ວຈະຊົງເພີ້ມເຕີມໃຫ້ແກ່ຜູ້ນັ້ນອີກ" ສະແດງປ່ອງຢ້ຽມຫລືຜ້າກັ້ງ?

____________________________________________________

ຂ. ຄຳວ່າ"ຜູ້ທີ່ບໍ່ມີນັ້ນເຖິງແມ່ນສິ່ງທີ່ຕົນມີຢູ່ກໍ່ຈະຊົງຍົກເອົາໄປຈາກຜູ້ນັ້ນເສຍ"ສະແດງອັນໃດ? __________________________________________

**17** ຄຳຕອບຂອງພະອົງຕໍ່ພວກສາວົກມີຄວາມໝາຍ2ປະການ. ຄຳອຸປະມາສ່ວນຫລາຍມີຄວາມໝາຍເປັນ2ຊັ້ນຄື: ຊັ້ນໃນ(ຜ້າກັ້ງ)ແລະຊັ້ນນອກ(ປ່ອງຢ້ຽມ)

ກ. ຝ່າຍຄົນທີ່ຊອກຫາຄວາມຈິງຄຳອູປະມາຄືຫຍັງ? ________________________

ຂ. ແຕ່ຝ່າຍພວກຄົນທີ່ບໍ່ສົນໃຈຄຳອູປະມາຄືຫຍັງ? ________________________

**18** ໃຫ້ອ່ານມັດທາຍ13:14-15 ແມ່ນຜູ້ທຳນວາຍໃດທີ່ບອກວ່າບາງຄົນຈະບໍ່ຍອມຮັບຟັງເລື່ອງອານາຈັກ ເຂົາຈຶ່ງຈະບໍ່ເຂົ້າ ໃຈຄຳອຸປະມາຂອງພະເຢຊູ? ________________ (ເບິ່ງຂໍ້ອ້າງ) ໃນບົດໃດຂໍ້ໃດ? __________________________________________

**19** ຕາມທຳນວາຍນັ້ນສ່ວນຄົນເລົ່ານັ້ນ:

ກ. ໃຈເຂົາເປັນຢ່າງໃດ? ________________________________________

ຂ. ຫູເດ? ________________________________________________

ຄ. ຕາເດ? ________________________________________________

**20** ກ.ສ່ວນຜູ້ທີ່ຕ້ອງການຮູ້ເລື່ອງດ້ານຄຳອຸປະມາຄືຫຍັງ? ________________________

ຂ.ຝ່າຍຜູ້ທີ່ບໍ່ຢາກຮູ້ເດ? ________________________________________

**21** ກ. ແມ່ນໃຜທຳນວາຍວ່າບາງຄົນຈະເຂົ້າໃຈພະຄຳຂອງພະອົງບໍ່ຖືກ? ______________

ຂ. ຄຳອູປະມານັ້ນເປັນຜົນປະໂຫຍດ2ຢ່າງໃດແດ່? __________ ແລະ __________

**22** ສັນລະເສີນ ພະເຈົ້າ ທີ່ມີບາງຄົນທີ່ຊອກຫາຄວາມຈິງແທ້.

ກ. ໃນ ມທ 13:36 ແລະ 51 ແມ່ນພວກໃດທີ່ເຂົ້າໃຈຄຳອຸປະມາແດ່ແລ້ວ? __________

ຂ. ຕາ ແລະ ຫູ ຂອງພວກສາວົກເປັນຢ່າງໃດ? (ມທ 13:16) ____________________

*ໃຫ້ທ່ານອ່ານມັດທາຍ 13:16-17 ແລະປຽບກັນກັບ ມທ 5:1-12 ຄົນໃດທີ່ສຳນຶກຄວາມຕ້ອງການດ້ານວິນຍານ ຄົນນັ້ນກໍເປັນສຸກ ເພາະເຂົາຈະໄດ້ຮັບອານາຈັກສະຫວັນ. ຈົ່ງເປີດອ່ານເບີ!*

**23** ຄົນໃດທີ່ເປັນອຸປະມາ ແລະ ເຂົ້າໃຈຕົວຢ່າງ ແຕ່ບໍ່ເຂົ້າໃຈຄວາມໝາຍດ້ານວິນຍານ ຄົນນັ້ນກໍລັບຕາດ້ານວິນຍານ. ເທື່ອໃດທີ່ມີຄຳອຸປະມາ ມັນປະກອບດ້ວຍສອງຢ່າງຈາກຊີວິດປະຈຳວັນ ແລະ ຄວາມໝາຍດ້ານວິນຍານ.

ກ. ຄຳອຸປະມາຄືຫຍັງ? ________________________________________

ຂ. ມີຈຸດປະສົງສອງດ້ານໃດແດ່? ________________ ແລະ ________________

ຄ. ກົດລະບຽບເພື່ອຕີຄວາມໝາຍຈາກຄຳອຸປະມາຄືຫຍັງ? ____________________

**24** ການທີ່ພວກສາວົກຖາມພະອົງ ເລື່ອງຄວາມໝາຍຂອງຄຳອຸປະມາ ສະແດງວ່າເຂົາຢາກຮູ້ຄວາມຈິງແທ້. ພະອົງສັງເກດ ວ່າ ເຂົາບໍ່ໄດ້ເຂົ້າໃຈເລື່ອງຄວາມໝາຍດ້ານຈິດວິນຍານ. ໃນ ມທ 13:18 ພະອົງແກ້ບັນຫາຢ່າງໃດ? ______________________________

*ນັກເທດຣັບພາລະໜັກຢ່າງໜຶ່ງວ່າ ຈະໃຫ້ພວກຄຣິດສະຕຽນເຂົ້າໃຈຄວາມໝາຍໃນຄຳອຸປະມາທີ່ພະອົງຍົກມາ. ຕໍ່ໄປເຮົາຈະເຫັນວ່າ ພະເຢຊູຕີຄວາມໝາຍໃນເລື່ອງຜູ້ຫວ່ານເປັນແນວໃດ?*

## ເລື່ອງຜູ້ຫວ່ານ

**25** ໃຫ້ທ່ານອ່ານຄຳອະທິບາຍຂອງ ພະເຢຊູ ເລື່ອງຜູ້ຫວ່ານ. ເລື່ອງນັ້ນຢູ່ໃນ ມັດທາຍ 13 ຂໍ້ໃດແດ່? ______________________________

**26** ໃຫ້ທ່ານເປີດເບິ່ງໜ້າປົກບົດສອນນີ້ແລ້ວເບິ່ງຮູບ ໃນຮູບນັ້ນ

1. ຕົວອັກສອນໃດອ້າງເຖິງເມັດທີ່ຫວ່ານຕົກກາງພູ່ມໜາມ? ____________________
2. ຕົວອັກສອນໃດອ້າງເຖິງດິນດີ? ______________________________
3. ຕົວອັກສອນໃດອ້າງເຖິງເມັດທີ່ຕົກຕາມທາງ? ____________________
4. ຕົວໃດອ້າງເຖິງບ່ອນມີຫີນ? ______________________________

**27** ພະເຢຊູສອນວ່າ ດິນຫຼາຍຢ່າງນັ້ນ ປຽບທຽບກັບຈິດວິນຍານມະນຸດດ້ວຍ.

ກ. ໃນຄຳອຸປະມາມີດິນຈັກຢ່າງ? ______________________________

ຂ. ບາງເມັດເກີດມີຜົນ ແລະ ບາງເມັດບໍ່ມີຜົນຢູ່ກັບຄູນນະພາບເມັດພືດ ຫຼື ຢູ່ກັບສະພາບດິນ?

______________________________

**28** ບາງຄົນຍິນດີຕ້ອນຮັບພະທຳຂອງພະເຈົ້າ ແລະ ບາງຄົນບໍ່ຮັບ ແຕ່ອຳນາດໃນພະຄຳຂອງພະເຈົ້າບໍ່ປ່ຽນແປງພະເຢຊູ ກໍ ບໍ່ປ່ຽນແປງ ແມ່ນແຕ່ບາງບ່ອນມີດິນດີ ແລະ ບາງບ່ອນບໍ່ດີ. (ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້)

ກ. ໃນຄຳອຸປະມານັ້ນ ຈຸດອ່ອນຫຼືການຂາດຕົກບົກຜ່ອງບໍ່ຢູ່ກັບ ____________________

ຂ. ແຕ່ຢູ່ກັບສະພາບຂອງ ______________________________

ຄ. ດິນນັ້ນປຽບທຽບກັບຫຍັງ? ______________________________

*ບາດນີ້ເຮົາຈະວ່າດິນດີ ແລະ ດິນຕາມທາງເປັນຢ່າງໃດ?*

**29** ກ. ໃນດິນສີ່ຢ່າງນັ້ນແມ່ນອັນໃດທີ່ເກີດມີຜົນ? ______________________________

ຂ. ໃນຄຳອະທິບາຍຂອງພະເຢຊູ ເລື່ອງດິນນັ້ນ ດິນຢ່າງດີຈະປະກອບດ້ວຍ 3 ຢ່າງໃດ? ເລືອກ

1. ໄດ້ຍິນພະທຳ.
2. ຖົກຖຽງເລື່ອງພະທຳ.
3. ເຂົ້າໃຈພະທຳ.

4. ເລົ່າ ຫຼື ທ່ອງຂຶ້ນໃຈພະທຳ.
5. ເກີດມີຜົນ. (ຟັງຄວາມ ແລະ ປະຕິບັດຕາມ)

**30** ສາມສ່ວນໃນດ້ານທີ່ດີຄື: ໄດ້ຍິນ ເຂົ້າໃຈ ແລະ ຟັງຄວາມ. ສາມສ່ວນນັ້ນຄືກັນກັບ ວິທີຮຽນພະຄຳພີ 3 ປະການຄື: ສັງເກດ ອະທິບາຍ ແລະ ນຳມາໃຊ້.

ກ. ການໄດ້ຍິນປຽບທຽບກັບການຮຽນດ້ວຍວິທີໃດ? ______________________________

ຂ. ການເຂົ້າໃຈປຽບກັບວິທີໃດ? ______________________________________________

ຄ. ການປະຕິບັດຕາມ (ຟັງຄວາມ) ເດ? _________________________________________

**31** ກ. ດິນດີ ແລະ ດິນຕາມທາງ ຕ່າງກັນຫຼາຍ ພວກນົກມາກິນເມັດທີ່ຕົກໃສ່ດິນແຂງນັ້ນ ພວກນັ້ນໄດ້ຍິນມາແລ້ວ ແຕ່ ເຂົາບໍ່ ___________________________ (ຕື່ມຄວາມ)

ຂ. ອັນນີ້ປ-ຽບເໝືອນຢ່າງຄົນຮຽນພະຄຳພີເຖິງແຕ່ວິທີໃດ? ________________________

ຄ. ແຕ່ເຂົາບໍ່ຮຽນເຖິງວິທີໃດຕໍ່ໄປ? ____________________________________________

**32** ວິທີອະທິບາຍພະຄຳພີເປັນອັນດຽວກັນກັບການຕີຄວາມໝາຍດ້ວຍ. ບາງຄົນອາດຈະຟັງພະຄຳ ແຕ່ຖ້າຫາກວ່າເຂົາ ຈະປະຕິບັດຕາມເຂົາຕ້ອງເຂົ້າໃຈ ___________ ກ່ອນ. (ຕື່ມຄວາມ)

**33** ດັ່ງນັ້ນເຫັນວ່າດິນຕາມທາງນັ້ນປຽບທຽບກັບຄົນທີ່ໄດ້ຍິນແຕ່ຂາດຫຍັງ? (ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້)

ກ. ບໍ່ເຂົ້າ ________________________________________________________________

ຂ. ແລ້ວບໍ່ຟັງ _____________________________________________________________

ຄ. ໃນລາຍຊື່ຕໍ່ໄປນີ້ແມ່ນໃຜປຽບຄື: ດິນຕາມທາງ (ເລືອກ)

____________ ມັດທາຍ ____________ ຊີໂມນພັກຊາດນິຍົມ.

____________ ພວກຟາລີຊາຍ ____________ ໂຢຮັນ ອັກຄະສາວົກ.

ງ. ຝູງນົກນັ້ນປຽບຄືຫຍັງ? (ມທ 13:19) _______________________________________

**34** ເພື່ອຈະເປັນດິນດີ ເຮົາຕ້ອງຮຽນພະຄຳພີຈາກຂັ້ນໃດ ເຖິງຂັ້ນໃດແດ່?

ກ. _____________________________________________________________________

ຂ. _____________________________________________________________________

ຄ. _____________________________________________________________________

*ຕໍ່ໄປນີ້ບ່ອນມີຫີນເປັນຢ່າງໃດ?*

**35** ໃນ ມັດທາຍ 13:5 ບອກວ່າ "ລາງເມັດກໍຕົກລົງໃສ່ບ່ອນມີຫີນຫຼາຍດິນໜ້ອຍ ຈຶ່ງງອກຂຶ້ນໂລດເພາະດິນບໍ່ເລິກ..." ເຮົາເຫັນວ່າແສງແດດເຮັດໃຫ້ມັນຫ່ຽວແຫ້ງຕາຍ. ແມ່ນສິ່ງໃດທີ່ຂາດຕົກບົກຜ່ອງໃນບ່ອນຫີນຫຼາຍນັ້ນ? (ເລືອກ)

______ ເມັດພືດດີ ______ ຜູ້ຫວ່ານ ______ ດິນໜ້ອຍ

**36** ດິນນັ້ນປຽບເໝືອນຄົນ ບ່ອນມີຫີນນັ້ນປຽບເໝືອນຄົນທີ່ຮັບເອົາພະທຳທັນທີດ້ວຍຄວາມຫຍັງ?

_______________________________________________________________

**37** ກ. ຕົ້ນທີ່ງອກມາໃນບ່ອນທີ່ມີຫີນນັ້ນຂາດບໍ່ມີຫຍັງ? (ເລືອກ)

______ ແດດ. ______ ຮາກຢັ່ງລົງບໍ່ເລິກ. ______ ລຳຕົ້ນ. ______ ໃບ

ຂ. ເມື່ອແດດຮ້ອນມາແລ້ວຕົ້ນນັ້ນເປັນຢ່າງໃດ? ______________________________

ຄ. ຕາເວັນປຽບທຽບຄືຫຍັງ? ___________________________________________

**38** ການນີ້ສະແດງວ່າ ສິ່ງສຳຄັນໃນຜູ້ທີ່ຕິດຕາມອານາຈັກຂອງພະເຈົ້າ ບໍ່ແມ່ນຄວາມກະຕືລືລົ້ນທີ່ເຫັນກັບຕາ ແຕ່ເປັນ ການວາງຮາກເລິກລົງດີ. ໃຫ້ທ່ານອ່ານ ມັດທາຍ 8:18-22

ກ. ໃນສອງຄົນນັ້ນແມ່ນຄົນໃດສະແດງຄວາມກະຕືລືລົ້ນ? ______________________

ພະຄຳພີບໍ່ໄດ້ບອກເລື່ອງພວກເຂົາ ວ່າໄດ້ຕິດຕາມພະອົງຕໍ່ໄປຫຼືບໍ່.

ຂ. ຄັນເພີ່ນບໍ່ຕິດຕາມພະອົງໄປ ເພີ່ນຈະປຽບກັບອັນທີ່ຫວ່ານລົງບ່ອນໃດ? ___________

**39** ການຕໍ່ສູ້ ແລະ ຂົ່ມເຫັງຄຣິດສະຕຽນມີຢູ່ໃນເກືອບທຸກສະໄໝ ຖ້າຄຣິດສະຕຽນເຮົາຈະທົນໄດ້ແທ້ນັ້ນ ເຮົາຕ້ອງໃຫ້ພະ ທຳຂອງພະເຈົ້າ ວາງຮາກຢ່າງໃດ ໃນຈິດໃຈເຮົາ?

_______________________________________________________________

**40** ໃນຄຳຕໍ່ໄປນີ້ທີ່ຍົກມາຈາກພະຄຳພີ ໃຫ້ທ່ານໝາຍ √ ໄວ້ຂໍ້ທີ່ວ່າດ້ວຍຄົນທີ່ຮັບເອົາພະຕຳຂອງພະເຈົ້າຢ່າງມີຮາກເລິກ.

_____ກ. "ເມື່ອຖືກປ້ອຍດ່າ ເຮົາກໍອວຍພອນ ເມື່ອຖືກຂົ່ມເຫັງເຮົາກໍອົດທົນເອົາ" (1 ກລທ 4:12)

_____ຂ. "ພວກລູກສິດຂອງພະອົງຫຼາຍຄົນ ຈຶ່ງທໍ້ຖອຍບໍ່ຕິດຕາມພະອົງຕໍ່ໄປ" (ຢຮ 6:66)

_____ຄ. "ໂຢຮັນ ພີ່ນ້ອງຂອງທ່ານທັງຫຼາຍ ຜູ້ເປັນເພື່ອນຮ່ວມການຍາກລຳບາກ ຮ່ວມລາຊະອານາຈັກ ແລະ ຮ່ວມ ຄວາມພຽນອົດທົນເຊິ່ງເປັນການປະສົບການໃນພະເຢຊູ..." (ພນມ 1:9)

**41** ອາຈານ ໂປໂລ ແລະ ອັກຄະສາວົກ ໂຢຮັນອົດທົນໄດ້ດີ ເພາະເຫດທີ່ເຂົາເອົາພະຄຳຂອງພະເຈົ້າ ມາວາງຢ່າງເລິກຢູ່ ໃນບ່ອນໃດ? ______________________________________

| |
|---|
| ໃຫ້ທ່ານຄິດເລື່ອງນີ້ດີໆວ່າ ຜູ້ນຳພວກຄຣິດສະຕຽນເຮົາ<br>ຈະຕຽມພວກຄຣິດສະຕຽນໄວ້ໃຫ້ທົນການຂົ່ມເຫັງໄດ້ຢ່າງໃດ?<br>ຄວນມີໂອກາດປຶກສາຫາລືກັນໃນປະຊຸມຂ້າງໜ້າ. |

*ດິນບ່ອນມີພຸ່ມໜາມ ເປັນຢ່າງໃດ?*

**42** ຜູ້ໃດທີ່ບໍ່ໄດ້ຮັບເອົາພະວິນຍານບໍລິສຸດ ໃຈຂອງຄົນນັ້ນຈະເກີດມີສອງສິ່ງໃດ ທີ່ຫຸ້ມຮັດພະທຳເສັຍຈຶ່ງບໍ່ເກີດຜົນ? ຄວາມ ___________________ ຕາມທຳມະດາໂລກ.

**43** ສອງຄົນໃນມັດທາຍ 8:18-22 ແມ່ນຄົນໃດທີ່ປຽບເໝືອນຢ່າງກັບດິນມີພູ່ມໜາມ? ______

**44** ໃນມັດທາຍບົດ 8 ແລະ 9 ມີອີກຄົນນຶ່ງທີ່ປຽບຢ່າງກັບດິນດີ ຄົນນັ້ນຊື່ຫຍັງ? ___________

**45** ໃນຕາຕະລາງຕໍ່ໄປນີ້ ແມ່ນການສະຫຼຸບຄວາມເລື່ອງຄຳອຸປະມານີ້: (ຈົ່ງຕື່ມຄວາມທີ່ຂາດ)

| ດິນ 4 ຢ່າງ | ພະເຢຊູ ອະທິບາຍ | ຕົວຢ່າງ ໃນພະຄຳພີ |
|---|---|---|
| 1. ດິນຕາມທາງ | ຜູ້ທີ່ໄດ້ຍິນແຕ່ບໍ່ເຂົ້າ_____ແລະບໍ່ຟັງ _________ | ພວກ ________ |
| 2. ດິນມີຫີນ | ແດດຄືການຂົ່ມ_____ຄົນມີຮາກບໍ່___________ | ນັກ _________ |
| 3. ດິນມີພຸ້ມໜາມ | ການ_______ແລະຊັບ______ຫຸ້ມຮັດພະທຳເສຍ | ລູກ _________ |
| 4. ດິນດີ | ໄດ້_____ເຂົ້າ_____ແລະຟັງ _____________ | ມັດ _________ |




**46** ສີ່ຄົນໃນຮູບນັ້ນສະແດງເຖິງດິນ

1. ດິນຕາມທາງປຽບກັບຄົນໃນຮູບໃດ? ______________________________
2. ບ່ອນມີຫີນເດ? ______________________________
3. ພູ່ມໜາມຄືຮູບໃດ? ______________________________
4. ແລ້ວດິນດີປຽບຄືຮູບໃດ? ______________________________

**47** ເຖິງວ່າເຮົາໄດ້ແຍກຄຳອຸປະມາເປັນສ່ວນເພື່ອຈະຮຽນໄດ້ຢ່າງລະອຽດ ຄຳອຸປະມານີ້ສອນເລື່ອງດ້ານວິນຍານປະການ ໃຫຍ່ປະການໜຶ່ງ ເລື່ອງນັ້ນຄືຫຍັງ? (ເລືອກ)

ກ. ເຮົາບໍ່ຄວນຈະປະກາດທຳຂອງພະອົງ ເພາະຄົນສ່ວນຫຼາຍຈະບໍ່ຮັບເອົາ.

ຂ. ຖ້າວ້າເຮົາຫວ່ານພືດຫຼາຍເຮົາຈະເກັບກ່ຽວຫຼາຍ.

ຄ. ຜູ້ທີ່ເຮົາຈະປະກາດໃຫ້ນັ້ນມີຢູ່ຫຼາຍຢ່າງ.

**48** ກົດລະບຽບເລື່ອງວິທີຕີຄວາມໝາຍໃນຄຳອຸປະມາຄືຫຍັງ? ____________________

______________________________________________________________

______________________________________________________________

**49** ຖ້າວ່າເຮົາຈະເກັບກ່ຽວຫຼາຍຈຳເປັນຕ້ອງຫວ່ານພືດຫຼາຍ ແຕ່ບໍ່ແມ່ນທຸກເທື່ອທີ່ເຮົາຈະໄດ້ເກັບກ່ຽວຫຼາຍ ແລ້ວແຕ່ດິນ! ຜູ້ ຫວ່ານຈຳເປັນຕ້ອງຫວ່ານດ້ວຍຄວາມເຕັມໃຈ ແຕ່ຄຳອຸປະມານີ້ອ້າງເຖິງສິ່ງໃດກ່ອນ? ____________________________________________

*ຢ່າລືມຕອບບົດເສັງໂລດເດີ້!*

**ຄຳຕອບ:**

**1** *ກ. ຊື່ສັດຊື່. ຂ. ການອັດສະຈັນ ແລະ ການເມດສະໜາປ່າວປະກາດ.*
**2** *ຂ. ຖືກ*
**3** *ອານາຈັກສະຫວັນ*
**4** *ກ. ພະທຳຂອງພະເຈົ້າ ຂ. ອານາຈັກສະຫວັນ*
**5** *ເລື່ອງຜູ້ຫວ່ານ*
**6** *ກ. ອານາຈັກສະຫວັນ ຂ. ອານາຈັກສະຫວັນ*
**7** *ຂ. ຖືກ*
**8** *ຕົວຢ່າງ...ປະຈຳວັນ...ຈິດວິນຍານ*
**9** *ອານາຈັກ*
**10** *ຂ.ຖືກ*
**11** *ໜຶ່ງ*
**12** *ກ. ຄຳອຸປະມາຍົກຕົວຢ່າງມາຈາກຊີວິດປະຈຳ ວັນເພື່ອອະທິບາຍເລື່ອງຄວາມຈິງດ້ານວິນຍານ.*
*ຂ. ໜຶ່ງປະການ.*
*ຄ.ຈົ່ງຊອກຫາແຕ່ຄວາມຈິງທີ່ສຳຄັນ ດ້ານວິນຍານປະການດຽວ.*
*ງ. ອານາຈັກ*
**13** *" ເຫດສັນໃດທ່ານຈຶ່ງກ່າວກັບເຂົາເປັ ຄຳອຸປະມາ?"*
**14** *ກ. ແລະ ຂ. ຖືກ*
**15** *ກ. ຄ. ແລະ ຈ. ຖືກ*
**16** *ກ. ປ່ອງຢ້ຽມ ຂ. ຜ້າກັ້ງ*
**17** *ກ. ປ່ອງຢ້ຽມ ຂ.ຜ້າກັ້ງ*
**18** *ເອຊາຢາ ບົດ 6:9-10*
**19** *ກ. ປຶກໜາ ຂ. ໜັກ ຄ. ຫັລບ*
**20** *ກ. ປ່ອງຢ້ຽມ ຂ. ຜ້າກັ້ງ*
**21** *ກ. ເອຊາຢາ ຂ. ປ່ອງຢ້ຽມ ແລະ ຜ້າກັ້ງ*
**22** *ກ. ເປັນສາວົກຂອງພະອົງ ຂ. ເປັນສຸກ*

## ຄຳຕອບ (ຕໍ່):

**23** *ກ. ຍົກຕົວຢ່າງຈາກຊີວິດປະຈຳວັນເພື່ອອະທິບາຍເລື່ອງຄວາມຈິງດ້ານວິນຍານ*
*ຂ. ປ່ອງຢ້ຽມ ແລະ ຜ້າກັ້ງ*
*ຄ. ຊອກຫາຄວາມຈິງທີ່ສຳຄັນດ້ານວິນຍານແຕ່ປະການດຽວ*

**24** *ພະອົງອະທິບາຍໃຫ້ເຂົາຮູ້*

**25** *ຂໍ້ 18-23*

**26** *1. ຂ 2. ກ 3. ງ 4. ຄ*

**27** *ກ. 4 ຢ່າງ ຂ. ຢູ່ກັບສະພາບດິນ*

**28** *ກ. ເມັດພືດ. ຂ. ດິນ. ຄ. ຈິດໃຈມະນຸດ.*

**29** *ກ. ດິນດີ. ຂ. 1, 3, 5*

**30** *ກ. ສັງເກດ. ຂ. ອະທິບາຍ. ຄ. ນຳມາໃຊ້.*

**31** *ກ. ເຂົ້າໃຈ. ຂ. ສັງເກດ. ຄ. ອະທິບາຍ.*

**32** *ຄວາມໝາຍ.*

**33** *ກ. ບໍ່ເຂົ້າໃຈ. ຂ. ບໍ່ຟັງຄວາມ. ຄ. ພວກຟາລີຊາຍ. ງ. ມານຮ້າຍ.*

**34** *ກ. ຈາກໄດ້ຍິນ ຂ. ເຖິງເຂົ້າໃຈ ຄ. ແລ້ວຟັງຄວາມ (ປະຕິບັດຕາມ)*

**35** *ດິນໜ້ອຍ*

**36** *ຍິນດີ.*

**37** *ກ. ຮາກຢັ່ງລົງບໍ່ເລິກ ຂ. ຫ່ຽວແຫ້ງໄປ. ຄ. ຄວາມຍາກລຳບາກ ຫຼື ການຂົ່ມເຫັງ*

**38** *ກ. ບັກທຳ ຂ. ບ່ອນມີຫີນ*

**39** *ລົງເລິກໃນໃຈເຮົາ*

**40** *ກ. ແລະ ຄ. ຖືກ*

**41** *ໃນຈິດໃຈ*

**42** *ກັງວົນ ຊັບສົມບັດ*

**43** *ສິດອີກຜູ່ນຶ່ງ*

**44** *ມັດທາຍ*

**45** *1. ໃຈ...ຄວາມ ຟາລີຊາຍ 2. ເຫັງ...ເລິກ ທຳ*
*3. ກັງວົນ...ສົມບັດ ສິດອີກຜູ້ນຶ່ງ 4. ຍິນ...ໃຈ...ຄວາມ ທາຍ*

**46** *1. ຮູບ ຄ 2. ຮູບ ກ 3. ຮູບ ງ 4. ຮູບ ຂ*

**47** *ຄ. ຖືກ*

**48** *ໃນການຕີຄວາມໝາຍຂອງຄຳອຸປະມາທ່ານຈົ່ງ ຊອກຫາ ແຕ່ຄວາມຈິງທີ່ສຳຄັນດ້ານວິນຍານໜຶ່ງ ປະການເທົ່ານັ້ນ*

**49** *ອ້າງເຖິງດິນ (ໝາຍເຖິງຜູ້ຮັບຟັງ)*